ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

0600----

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ................/ອຄ.ກຂອ.

ນະຄອນຫຼວງວຽງຈັນ, ວັນທີ ...................... 03 JUN 2019

# ຂໍ້ຕົກລົງ

## ວ່າດ້ວຍການປະກາດໃຊ້ລະບຽບສະເພາະຜະລິດຕະພັນ ຕາມສາລະບານອັດຕາພາສີຂອງສິນຄ້າເອກະພາບອາຊຽນ ປີ 2017 (PSR HS 2017) ຕາມການປັບປຸງຂອງສັນຍາການຄ້າສິນຄ້າຂອງອາຊຽນ ຫຼື ATIGA.

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 230/ນຍ, ລົງວັນທີ 24 ກໍລະກົດ 2017;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍແຫຼ່ງກຳເນີດສິນຄ້ານຳເຂົ້າ ແລະ ສົ່ງອອກ, ສະບັບເລກທີ 228/ນຍ, ລົງວັນທີ 22 ເມສາ 2010;
- ອີງຕາມ ລະບຽບສະເພາະຜະລິດຕະພັນ ຕາມສາລະບານສິນຄ້າລເອກະພາບອາຊຽນປີ 2017 (PSR HS 2017), ສະບັບລົງວັນທີ 07 ກໍລະກົດ 2017;
- ອີງຕາມ ການສະເໜີຂອງ ກົມການນຳເຂົ້າ ແລະ ສົ່ງອອກ.

ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:

ມາດຕາ 1. ປະກາດໃຊ້ລະບຽບສະເພາະຜະລິດຕະພັນ ຕາມສາລະບານອັດຕາພາສີຂອງສິນຄ້າເອກະພາບອາຊຽນປີ 2017 (PSR HS 2017).

ມາດຕາ 2. ມອບໃຫ້ ກົມການນຳເຂົ້າ ແລະ ສົ່ງອອກ ຮັບຜິດຊອບແນະນຳ, ແລະ ເຜີຍແຜ່ວິທີຈັດຕັ້ງປະຕິບັດລະອຽດ ກ່ຽວກັບ ລະບຽບດັ່ງກ່າວ ເພື່ອໃຫ້ຂໍ້ຕົກລົງສະບັບນີ້ຖືກປະຕິບັດຢ່າງໄດ້ຮັບຜົນດີ.

ມາດຕາ 3. ຂໍ້ຕົກລົງສະບັບນີ້ມີຜົນບັງຄັບໃຊ້ເລີ່ມແຕ່ວັນທີ 01 ມິຖຸນາ 2019 ເປັນຕົ້ນມາ.

ລັດຖະມົນຕີ

ນ.ເຂັມມະນີ ພົນເສນາ